ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ

ກົມສິ່ງແວດລ້ອມ

ເລກທີ 2134 /ກຊສ.ກສລ

ນະຄອນຫຼວງວຽງຈັນ, ວັນທີ 28 JUL 2022

# ໃບຢັ້ງຢືນກ່ຽວກັບສິ່ງແວດລ້ອມ

## ຮັບຮອງເອົາ ບົດປະເມີນຜົນກະທົບຕໍ່ສິ່ງແວດລ້ອມແບບລະອຽດ ລວມທັງແຜນຄຸ້ມຄອງ ແລະ ຕິດຕາມ ກວດກາສິ່ງແວດລ້ອມ ຂອງໂຄງການຜະລິດໄຟຟ້າຈາກກັງຫັນລົມ 600 ເມກາວັດ ຂອງບໍລິສັດ ອິມແພັກ ເອັນເນີຈີເອເຊຍ ດີວີລົບເມັ້ນ ຈຳກັດ

- ອີງຕາມ ກົດໝາຍວ່າດ້ວຍການປົກປັກຮັກສາສິ່ງແວດລ້ອມ (ສະບັບປັບປຸງ) ເລກທີ 29/ສພຊ, ລົງວັນທີ 18 ທັນວາ 2012;
- ອີງຕາມ ດຳລັດວ່າດ້ວຍການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ ສະບັບເລກທີ 21/ລບ, ລົງວັນທີ 31 ມັງກອນ 2019;
- ອີງຕາມ ຂໍ້ຕົກລົງວ່າດ້ວຍການມອບສິດໃຫ້ກົມສິ່ງແວດລ້ອມ ເຊັນໃບຢັ້ງຢືນກ່ຽວກັບສິ່ງແວດລ້ອມ ສະບັບເລກທີ 3930/ກຊສ, ລົງວັນທີ 26 ກໍລະກົດ 2022.

**ກົມສິ່ງແວດລ້ອມ ຕົກລົງ:**

1. ຮັບຮອງເອົາ ບົດປະເມີນຜົນກະທົບຕໍ່ສິ່ງແວດລ້ອມແບບລະອຽດ, ລວມທັງແຜນຄຸ້ມຄອງ ແລະ ຕິດຕາມ ກວດກາສິ່ງແວດລ້ອມ ສະບັບເດືອນພຶດສະພາ 2022 ສຳລັບໂຄງການຜະລິດໄຟຟ້າຈາກກັງຫັນລົມ 600 ເມກາວັດ, ເມືອງດາກຈຶງ ແຂວງເຊກອງ ແລະ ເມືອງຊານໄຊ ແຂວງອັດຕະປື ຂອງບໍລິສັດ ອິມແພັກ ເອັນເນີຈີເອເຊຍ ດີວີລົບເມັ້ນ ຈຳກັດ;
2. ເຈົ້າຂອງໂຄງການ ຕ້ອງປະຕິບັດຢ່າງເຂັ້ມງວດ ເນື້ອໃນບົດບັນທຶກວ່າດ້ວຍບັນດາເງື່ອນໄຂທີ່ກຳນົດໄວ້ເປັນເອກະສານຊ້ອນທ້າຍຂອງໃບຢັ້ງຢືນ ແລະ ຖ້າຫາກບໍ່ປະຕິບັດໄດ້ໃນເງື່ອນໄຂໃດໜຶ່ງ, ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ມີສິດພິຈາລະນາໂຈະ ຫຼື ຍົກເລີກໃບຢັ້ງຢືນກ່ຽວກັບສິ່ງແວດລ້ອມ ສະບັບນີ້;
3. ໃບຢັ້ງຢືນກ່ຽວກັບສິ່ງແວດລ້ອມ ສະບັບນີ້ ມີຜົນບັງຄັບໃຊ້ໄດ້ຕະຫຼອດອາຍຸສຳປະທານໂຄງການ, ແຕ່ຕ້ອງໄດ້ສ້າງແຜນຄຸ້ມຄອງ ແລະ ຕິດຕາມ ກວດກາສິ່ງແວດລ້ອມ ໃນໄລຍະກໍ່ສ້າງ ແລະ ໄລຍະດຳເນີນໂຄງການ ນຳສະເໜີ ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ພິຈາລະນາຮັບຮອງເອົາກ່ອນການຈັດຕັ້ງປະຕິບັດ 90 ວັນລັດຖະການ. ຖ້າບໍ່ປະຕິບັດ ຖືວ່າໃບຢັ້ງຢືນກ່ຽວກັບສິ່ງແວດລ້ອມສະບັບນີ້ ສິ້ນສຸດອາຍຸການນຳໃຊ້ ແລະ ຖືກຍົກເລີກໃນທັນທີ;

   ໃນກໍລະນີ ບໍ່ດຳເນີນການ ຫຼື ບໍ່ມີຄວາມຄືບໜ້າ ໃນການຈັດຕັ້ງປະຕິບັດໂຄງການ ພາຍໃນເວລາ 2 ປີ ນັບແຕ່ໄດ້ຮັບໃບຢັ້ງຢືນກ່ຽວກັບສິ່ງແວດລ້ອມ ແມ່ນຈະຖືວ່າ ໃບຢັ້ງຢືນກ່ຽວກັບສິ່ງແວດລ້ອມສະບັບນີ້ ຖືກຍົກເລີກໃນທັນທີ;
4. ໃບຢັ້ງຢືນສະບັບນີ້ ມີຜົນສັກສິດນັບຕັ້ງແຕ່ວັນລົງລາຍເຊັນເປັນຕົ້ນໄປ.

**ຫົວໜ້າກົມ**

ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ກົມສິ່ງແວດລ້ອມ

ອຸ່ນເຮືອນ ໄຊຍະຈັກ

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

# ບົດບັນທຶກ

## ວ່າດ້ວຍ ບັນດາເງື່ອນໄຂ ທີ່ກຳນົດໄວ້ເປັນເອກະສານຊ້ອນທ້າຍ ຂອງໃບຢັ້ງຢືນກ່ຽວກັບສິ່ງແວດລ້ອມ ຮັບຮອງບົດປະເມີນຜົນກະທົບຕໍ່ສິ່ງແວດລ້ອມແບບລະອຽດ ລວມທັງແຜນຄຸ້ມຄອງ ແລະ ຕິດຕາມ ກວດກາສິ່ງແວດລ້ອມ ສະບັບເດືອນພຶດສະພາ 2022 ສຳລັບໂຄງການຜະລິດໄຟຟ້າຈາກກັງຫັນລົມ 600 ເມກາວັດ, ຢູ່ເມືອງດາກຈຶງ ແຂວງເຊກອງ ແລະ ເມືອງຊານໄຊ ແຂວງອັດຕະປື

ເຈົ້າຂອງໂຄງການ (ຜູ້ພັດທະນາໂຄງການ) ຕ້ອງປະຕິບັດຕາມເງື່ອນໄຂ ດັ່ງລຸ່ມນີ້:

1. ກ່ອນການກໍ່ສ້າງໂຄງການ ຕ້ອງປະສານສົມທົບ ກັບອົງການປົກຄອງທ້ອງຖິ່ນ ແລະ ຂະແໜງການກ່ຽວຂ້ອງ ລວມທັງປະຊາຊົນທີ່ໄດ້ຮັບຜົນກະທົບໂດຍກົງ ເພື່ອປຶກສາຫາລືຕົກລົງເຫັນດີນຳກັນກ່ອນ ຈຶ່ງຄ່ອຍເລີ່ມລົງມືຈັດຕັ້ງປະຕິບັດກິດຈະກຳສຳຄັນຂອງໂຄງການ ເປັນຕົ້ນ: ແຜນການລະອຽດໃນການທົດແທນຄ່າເສຍຫາຍໃຫ້ແກ່ຜູ້ໄດ້ຮັບຜົນກະທົບ ແລະ ແຜນພັດທະນາຊຸມຊົນ-ແຜນພັດທະນາທ້ອງຖິ່ນ;
2. ຕ້ອງດຳເນີນການຫັນປ່ຽນເນື້ອທີ່ດິນປ່າໄມ້ ແລະ ປ່າໄມ້ ໃຫ້ສຳເລັດໃນໄລຍະກະກຽມສັນຍາສຳປະທານໂຄງການ, ໂດຍສົມທົບກັບກົມປ່າໄມ້ ກະຊວງກະສິກຳ ແລະ ປ່າໄມ້, ກົມທີ່ດິນ ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງທັງຂັ້ນສູນກາງ ແລະ ທ້ອງຖິ່ນ ເກັບກຳຂໍ້ມູນຄືນລະອຽດ ກ່ອນຂໍອະນຸມັດການຫັນປ່ຽນພື້ນທີ່ດັ່ງກ່າວໄປສູ່ເປົ້າໝາຍການພັດທະນາໂຄງການ ຕາມລະບຽບການ;
3. ຮັບປະກັນ ໃຫ້ບັນດາຜູ້ຮັບເໝົາລວມ ແລະ ຜູ້ຮັບເໝົາຍ່ອຍ ຂອງໂຄງການ ໄດ້ເອົາໃຈໃສ່ຈັດຕັ້ງປະຕິບັດຢ່າງເຂັ້ມງວດ ແລະ ຖືກຕ້ອງຄົບຖ້ວນທຸກມາດຕະການຫຼຸດຜ່ອນຜົນກະທົບຕໍ່ສິ່ງແວດລ້ອມສັງຄົມ ແລະ ສິ່ງແວດລ້ອມທຳມະຊາດ ທີ່ໄດ້ລະບຸໄວ້ໃນບົດປະເມີນຜົນກະທົບຕໍ່ສິ່ງແວດລ້ອມແບບລະອຽດ ລວມທັງແຜນຄຸ້ມຄອງ ແລະ ຕິດຕາມ ກວດກາສິ່ງແວດລ້ອມ ໃຫ້ໄດ້ດີ ແລະ ມີປະສິດທິຜົນ;
4. ກຳນົດມາດຕະການຫຼຸດຜ່ອນ ແລະ ແກ້ໄຂຜົນກະທົບ ຕໍ່ການສ້າງເສັ້ນທາງຊົ່ວຄາວເຂົ້າຫາຈຸດທີ່ຕັ້ງຕີນເສົາ ແລະ ມາດຕະການຟື້ນຟູຄືນ ພາຍຫຼັງສຳເລັດການກໍ່ສ້າງ ນຳສົ່ງມາຍັງ ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ພິຈາລະນາກ່ອນການຈັດຕັ້ງປະຕິບັດ;
5. ຮັບຜິດຊອບທຸກຂໍ້ມູນທີ່ມີໃນບົດປະເມີນຜົນກະທົບຕໍ່ສິ່ງແວດລ້ອມແບບລະອຽດ ລວມທັງແຜນຄຸ້ມຄອງ ແລະ ຕິດຕາມ ກວດກາສິ່ງແວດລ້ອມ ສະບັບທີ່ຮັບຮອງ. ໃນກໍລະນີ ຫາກມີຜົນກະທົບຕໍ່ສິ່ງແວດລ້ອມ ເກີດຂຶ້ນໂດຍບໍ່ໄດ້ກຳນົດໄວ້ ໃນບົດປະເມີນຜົນກະທົບຕໍ່ສິ່ງແວດລ້ອມແບບລະອຽດ ລວມທັງແຜນຄຸ້ມຄອງ ແລະ ຕິດຕາມ ກວດກາສິ່ງແວດລ້ອມ ເຈົ້າຂອງໂຄງການ ຕ້ອງຮັບຜິດຊອບເພີ່ມເຕີມ ໃນການກຳນົດ ແລະ ຈັດຕັ້ງປະຕິບັດມາດຕະການຫຼຸດຜ່ອນບັນດາຜົນກະທົບເຫຼົ່ານັ້ນ ພ້ອມທັງ ກຳນົດໜ່ວຍງານຮັບຜິດຊອບ, ງົບປະມານ ແລະ ວັນເວລາຈັດຕັ້ງປະຕິບັດຢ່າງຖືກຕ້ອງ ແລະ ຊັດເຈນ;
6. ຮັບຜິດຊອບ ຕໍ່ຄວາມບໍ່ຖືກຕ້ອງ, ບໍ່ຄົບຖ້ວນ ຫຼື ຄວາມຜິດພາດ (ໂດຍເຈດຕະນາ ຫຼື ບໍ່ເຈດຕະນາ) ໃນການຄາດຄະເນ ງົບປະມານແຕ່ລະລາຍການ ທີ່ໄດ້ກຳນົດໄວ້ໃນບົດປະເມີນຜົນກະທົບຕໍ່ສິ່ງແວດລ້ອມແບບລະອຽດ ແລະ ແຜນຄຸ້ມຄອງ ແລະ ຕິດຕາມ ກວດກາສິ່ງແວດລ້ອມ ໂດຍຕ້ອງໄດ້ປຶກສາຫາລືກັບກັບ ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ເພື່ອປັບປຸງແກ້ໄຂຄືນໃຫ້ສອດຄ່ອງກັບສະພາບຄວາມເປັນຈິງ ພ້ອມທັງສະເໜີງົບປະມານຕິດຕາມ ກວດກາການຈັດຕັ້ງປະຕິບັດແຜນຄຸ້ມຄອງດັ່ງກ່າວ ກ່ອນການລົງມືກິດຈະກຳກໍ່ສ້າງໂຄງການ ໂດຍຮັບປະກັນໃຫ້ທັນກັບເວລາ ຕາມຄວາມຮຽກຮ້ອງຕ້ອງການຂອງຂະແໜງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມຂັ້ນສູນກາງ ແລະ ທ້ອງຖິ່ນ;

7. ອຳນວຍຄວາມສະດວກໃຫ້ແກ່ຄະນະວິຊາການ ຂອງ ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ແລະ ຂະແໜງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ຂັ້ນທ້ອງຖິ່ນ ແຕ່ລະຂັ້ນທີ່ກ່ຽວຂ້ອງ ເຂົ້າກວດກາພື້ນທີ່ໂຄງການ ແລະ ສາມາດເກັບຕົວຢ່າງຕ່າງໆ ໃນເວລາລົງຕິດຕາມ ກວດກາ ຕາມແຜນຄຸ້ມຄອງ ແລະ ຕິດຕາມ ກວດກາ ສິ່ງແວດລ້ອມ ຫຼື ນອກແຜນການດັ່ງກ່າວ ຖ້າເຫັນວ່າມີຄວາມຈຳເປັນ;

໘. ດຳເນີນການຕິດຕາມ ກວດກາ ການຈັດຕັ້ງປະຕິບັດ ມາດຕະການຫຼຸດຜ່ອນຜົນກະທົບຕໍ່ສິ່ງແວດລ້ອມ ດ້ວຍຕົນເອງ ແລະ ລາຍງານຜົນການກວດກາ ໃຫ້ຂະແໜງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ປະຈຳທຸກໆ 3 ເດືອນ, ໃນກໍລະນີເຫັນວ່າ ມີຄວາມສ່ຽງເກີດອຸປະຕິເຫດ, ເຫດການສຸກເສີນ ຍ້ອນສາເຫດເກີດມາຈາກການພັດທະນາໂຄງການຕົນທີ່ສ້າງຜົນກະທົບຮ້າຍແຮງຕໍ່ສິ່ງແວດລ້ອມ ຕ້ອງລາຍງານເຫດການດັ່ງກ່າວ ໂດຍທັນທີ ແລະ ໃນກໍລະນີມີເຫດການເກີດຂຶ້ນ ຕ້ອງລາຍງານເປັນລາຍລັກອັກສອນພາຍໃນ 24 ຊົ່ວໂມງ ພ້ອມທັງຮີບຮ້ອນດຳເນີນການປັບປຸງແກ້ໄຂຕົ້ນເຫດ ແລະ ຜົນກະທົບຕໍ່ເຫດການດັ່ງກ່າວຢ່າງທັນການ;

໙. ໃນກໍລະນີມີການມອບໂອນໂຄງການຕົນໃຫ້ຜູ້ອື່ນ, ເຈົ້າຂອງໂຄງການຜູ້ໃໝ່ ກໍ່ຕ້ອງໄດ້ສືບຕໍ່ປະຕິບັດມາດຕະການຫລຸດຜ່ອນຜົນກະທົບຕໍ່ສິ່ງແວດລ້ອມ, ງົບປະມານທີ່ກຳນົດໄວ້ໃນແຜນຄຸ້ມຄອງ ແລະ ຕິດຕາມ ກວດກາສິ່ງແວດລ້ອມ ລວມທັງ ບັນດາເງື່ອນໄຂທີ່ກຳນົດໄວ້ໃນໃບຢັ້ງຢືນກ່ຽວກັບສິ່ງແວດລ້ອມ ສະບັບນີ້;

10. ຖ້າຫາກມີການປ່ຽນແປງກຳລັງຕິດຕັ້ງ ຫຼື ປ່ຽນແປງຂະບວນການດຳເນີນໂຄງການ ເຈົ້າຂອງໂຄງການ ຕ້ອງສ້າງບົດປະເມີນຜົນກະທົບຕໍ່ສິ່ງແວດລ້ອມແບບລະອຽດ ລວມທັງແຜນຄຸ້ມຄອງ ແລະ ຕິດຕາມ ກວດກາສິ່ງແວດລ້ອມສະບັບໃໝ່ ສົ່ງໃຫ້ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ພິຈາລະນາຮັບຮອງ ຕາມລະບຽບຫຼັກການ.

ບົດບັນທຶກສະບັບນີ້ສ້າງຂຶ້ນ ລະຫວ່າງ ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ຊຶ່ງຕາງໜ້າໂດຍກົມສິ່ງແວດລ້ອມ ແລະ ບໍລິສັດ ອິມແພັກ ເອັນເນີຈີເອເຊຍ ດີວີລົບເມັ້ນ ຈຳກັດ (ເຈົ້າຂອງໂຄງການ) ເພື່ອເປັນບ່ອນອີງໃຫ້ເຈົ້າຂອງໂຄງການ ຈັດຕັ້ງປະຕິບັດບັນດາເງື່ອນໄຂຕ່າງໆ ຂອງໃບຢັ້ງຢືນຮັບຮອງບົດປະເມີນຜົນກະທົບຕໍ່ສິ່ງແວດລ້ອມແບບລະອຽດ ລວມທັງແຜນຄຸ້ມຄອງ ແລະ ຕິດຕາມ ກວດກາສິ່ງແວດລ້ອມ ທີ່ໄດ້ກຳນົດໄວ້ຢູ່ຂ້າງເທິງ ຢ່າງເຂັ້ມງວດ.

ນະຄອນຫລວງວຽງຈັນ, ວັນທີ 8 ກໍລະກົດ 2022

**ຜູ້ອຳນວຍການ**
**ບໍລິສັດ ອິມແພັກ ເອັນເນີຈີເອເຊຍ ດີວີລົບເມັ້ນ ຈຳກັດ**

NARUT BOAKAJORN

**ຫົວໜ້າກົມ**

ອຸ່ນເຮືອນ ໄຊຍະຈັກ